# ການເຮັດນ້ຳໝັກຈຸລິນຊີຈາກນ້ຳເຂົ້າໜ່າກັບນົມສົດ

## (ນົມສົ້ມໝູຫລຸມ)

ຈຸລິນຊີຈາກນ້ຳເຂົ້າໜ່າກັບນົມສົດ ຫລື ນົມປັສເຈີໄຣລິດຈືດ ຈະຊ່ວຍສົ່ງເສີມການລະບາຍອາກາດໃນດິນ, ຊ່ວຍການຈະເລີນເຕີບໂຕຂອງພືດ ແລະ ສັດ, ຕ້ານການຂະຫຍາຍໂຕຂອງເຊື້ອໂຣກໃນດິນ.

### ວັດສະດຸ ແລະ ອຸປະກອນ

1. ໂຖແກ້ວ ຫລື ພາສຕິກປາກກວ້າງ; 2. ນ້ຳເຂົ້າໜ່າ; 3. ນົມສົດ ຫລື ນົມຈືດ; 4. ນ້ຳຕານຊາຍແດງ; 5. ຮຳອ່ອນ; 6. ເຈ້ຍຂາວແຜ່ນໃຫຍ່; 7. ເຊືອກຟາງ;



### ຂັ້ນຕອນ ແລະ ວິທີການເຮັດ

1. ເອົານ້ຳເຂົ້າໜ່າໃສ່ໂຖໃຫ້ສູງ 15 ຊມ.
2. ຮຳອ່ອນ 3 ກຳມື ໂຮຍໜ້າໃຫ້ທົ່ວຢ່າງຊ້າໆ ຢ່າໃຫ້ເຫັນນ້ຳເຂົ້າໜ່າ ປິດປາກໂຖດ້ວຍເຈ້ຍຂາວ ມັດເຊືອກ ປະໄວ້ໃນບ່ອນຮົ່ມ 4-5 ມື້.
3. ໃຊ້ທໍ່ຢາງດູດນ້ຳໝັກຮຳອ່ອນອອກ 500 ຊີຊີ ຫລື 1 ສ່ວນ ໃສ່ໂຖອີກໜ່ວຍໜຶ່ງ ແລ້ວຕື່ມນົມສົດໃສ່ລົງໄປ 10 ສ່ວນ.
4. ໃສ່ຕານຊາຍແດງ 1/3 ຂອງປະລິມານທັງໝົດ ປິດປາກໂຖດ້ວຍເຈ້ຍຂາວ ມັດເຊືອກ ປະໄວ້ 8-12 ມື້.
5. ເມື່ອຄົບກຳນົດໃຫ້ເປີດຝາໂຖຕັກເອົາສ່ວນທີ່ເປັນວຸ້ນອອກ ສ່ວນນີ້ໃຊ້ເປັນຮໍໂມນເລັ່ງການຈະເລີນເຕີບໂຕຂອງຮາກພືດ ເຊັ່ນ: ກາຕອນກິ່ງ ແລະ ການປັກຊຳ.
6. ກອງເອົານ້ຳສ່ວນທີ່ເຫລືອໃສ່ຂວດຢາງປິດຝາໄວ້ໃນບ່ອນຮົ່ມ ແລະ ນຳໄປໃຊ້ ຫລື ສາມາດເກັບໄວ້ຊັ້ນລຸ່ມສຸດຂອງຕູ້ເຢັນ.



### ອັດຕາການໃຊ້

ນ້ຳໝັກໂຍເກີດ (ນົມສົ້ມ) 3 ບ່ວງແກງ ຕໍ່ ນ້ຳ 10 ລິດ.

### ຄຸນປະໂຫຍດ

1. ປະສົມນ້ຳ ຫລື ອາຫານໃຫ້ສັດກິນ ຊ່ວຍການຍ່ອຍໄດ້ຂອງອາຫານ ແລະ ເລັ່ງການຈະເລີນເຕີບໂຕຂອງສັດ.
2. ສີດພົ່ນໃບ ແລະ ຫົດເຫງົ້າຕົ້ນໄມ້ ເສີມສ້າງການເຮັດວຽກຂອງຈຸລິນຊີໃນພືດ.
3. ປະສົມກັບນ້ຳໝັກຈຸລິນຊີຊະນິດອື່ນໆ ຫົດ ຫລື ສີດພົ່ນໃນຄອກສັດ ເສີມສ້າງການເຮັດວຽກຂອງເຊື້ອຮາຂາວ.

NTPC Powering the Future
ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານຟື້ນຟູຊີວິດການເປັນຢູ່
ມີນາ 2013